ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພັນທະບັດ ທຫລ ຈຳໜ່າຍບັນລຸ 4 ພັນຕື້ກວ່າກີບ




ນັບຕັ້ງແຕ່ວັນທີ 15 ມິຖຸນາ 2022 ຈົນຮອດປັດຈຸບັນ (17 ສິງຫາ 2022) ເປັນເວລາ 45 ວັນລັດຖະການ ພັນທະບັດ ທຫລ ສາມາດຈຳໜ່າຍໄດ້ບັນລຸ 4.004 ຕື້ກີບ ຫຼືເທົ່າກັບ 80% ໂດຍປະເພດບຸກຄົນທີ່ຊື້ພັນທະບັດ ກວມອັດຕາສ່ວນ 42% ແລະ ນິຕິບຸກຄົນ ກວມອັດຕາສ່ວນ 38%

ຈຳໜ່າຍຜ່ານ 9 ທະນາຄານຕົວແທນຄື: ທະນາຄານ ການຄ້າຕ່າງປະເທດລາວມະຫາຊົນ (ທຄຕລ), ທະນາຄານພັດທະນາລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານຮ່ວມທຸລະກິດລາວ-ຫວຽດ, ທະນາຄານຮ່ວມພັດທະນາ, ທະນາຄານເອສທີ, ທະນາຄານພົງສະຫວັນ, ທະນາຄານອຸດສາຫະກຳແລະການຄ້າຈີນ (ICBC) ແລະ ທະນາຄານເພື່ອການລົງທຶນແລະການຄ້າ (BIC) ໃນຂອບເຂດທົ່ວປະເທດ ເຊິ່ງຍອດການຈຳໜ່າຍພັນທະບັດຜ່ານບັນດາທະນາຄານຕົວແທນຈຳໜ່າຍໃນແຕ່ລະພາກ ແມ່ນ**ພາກກາງມີຍອດຈຳໜ່າຍທັງໝົດ 2.425 ກວ່າຕື້ກີບ, ພາກເໜືອມີຍອດຈຳໜ່າຍທັງໝົດ 1.096 ກວ່າຕື້ກີບ ແລະ ພາກໃຕ້ມີຍອດຈຳໜ່າຍທັງໝົດ 483 ກວ່າຕື້ກີບ.** ໃນນີ້, ຜົນການຈຳໜ່າຍພັນທະບັດ ທຫລ ໃນແຕ່ລະທະນາຄານຕົວແທນແມ່ນມີພຽງແຕ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ (ທຄຕລ) ທີ່ສາມາດຈັດຕັ້ງປະຕິບັດການຈຳໜ່າຍພັນທະບັດ ໄດ້ສຳເລັດຕາມວົງເງິນທີ່ໄດ້ຮັບມອບໝາຍ (ຮອບທຳອິດ) ຈຳນວນ 1.150 ຕື້ກີບ ພາຍໃນໄລຍະເວລາພຽງ 5 ວັນ (15-21/06/2022), ຊຶ່ງເຮັດໃຫ້ ທຫລ ຕ້ອງຈັດສັນຍອດພັນທະບັດ (ໃໝ່) ໃຫ້ໃນຄັ້ງວັນທີ 01/07/2022 ຊຶ່ງລວມເປັນຍອດທັງໝົດ ຈຳນວນ 2.200 ຕື້ກີບ, ປັດຈຸບັນ ທຄຕລ ມີຍອດຈຳໜ່າຍ 1.785 ຕື້ກີບ ແລະ ປັດຈຸບັນທະນາຄານການຄ້າຕ່າງປະເທດລາວມະຫາຊົນຍັງສືບຕໍ່ຈຳໜ່າຍຢູ່ທຸກສາຂາໃນທຸກແຂວງທົ່ວປະເທດ ແລະ ທະນາຄານຕົວແທນອື່ນກຳລັງຈຳໜ່າຍຢ່າງເປັນປົກກະຕິ.

ພັນທະບັດ ທຫລ ເປັນເຄື່ອງມືນະໂຍບາຍເງິນຕາທີ່ມີຄວາມປອດໄພທີ່ສຸດ ໂດຍທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບປະກັນການຊຳລະຕົ້ນທຶນ ແລະ ດອກເບ້ຍ ຕາມທີ່ກຳນົດໄວ້ໃນໃບຢັ້ງຢືນການຖືຄອງພັນທະບັດ. ການອອກພັນທະບັດ ທຫລ ແມ່ນການນຳໃຊ້ເຄື່ອງມືນະໂຍບາຍເງິນຕາຂອງທະນາຄານກາງ ເພື່ອດຸນດ່ຽງເງິນໃນລະບົບຈໍລະຈອນ ໃຫ້ສົມຄູ່ກັບຄວາມຕ້ອງການຂອງລະບົບເສດຖະກິດຂອງ ສປປ ລາວ ແນໃສ່ຮັບປະກັນສະຖຽນລະພາບທາງດ້ານເງິນຕາແຫ່ງຊາດ ກໍຄືການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຂອງປະເທດ.

ທະນາຄານແຫ່ງ ສປປ ລາວ ໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງມາຍັງພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ***ທີ່ໃຫ້ການສະໜັບສະໜູນຊື້ພັນທະບັດ ທຫລ ເຊິ່ງເປັນການປະກອບສ່ວນຢ່າງສຳຄັນເຂົ້າໃນການຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາຂອງປະເທດເຮົາໃຫ້ດີຂຶ້ນເທື່ອລະກ້າວ. ພ້ອມທັງ ຂໍໃຫ້ບັນດາທ່ານ ສືບຕໍ່ສະໜັບສະໜູນພັນທະບັດຂອງ ທຫລ ເພື່ອໃຫ້ບັນລຸຕາມລະດັບຄາດໝາຍທີ່ກຳນົດ.***

**#ຮຽບຮຽງໂດຍ: ນາງ ປາໃນ ພັນທະລາ**

*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*